


# ຢາດີແກ້ບາບ

## ຄວາມລອດພົ້ນ

### ຄວາມບາບແລະການຖິ້ມໃຈເກົ່າເອົາໃຈໃໝ່

**ແມ່ນໃຜຖືກຮ້ອງໃຫ້ຖິ້ມໃຈເກົ່າເອົາໃຈໃໝ່?**

"ເຮົາບໍ່ໄດ້ມາເພື່ອຈະເອີ້ນຄົນສິນທັມ ແຕ່ມາເອີ້ນເອົາຄົນບອກສິນທັມໃຫ້ຖິ້ມໃຈເກົ່າເອົາໃຈໃຫມ່" (ລູກາ 5:32)

**ແມ່ນຫຍັງທີ່ມາພ້ອມກັບການຖິ້ມໃຈເກົ່າເອົາໃຈໃໝ່?**

"ແລະຈະຕ້ອງປະກາດທົ່ວທຸກປະເທດໃນພຣະນາມຂອງພຣະອົງໃຫ້ຖິ້ມໃຈເກົ່າເອົາໃຈໃຫມ່ຮັບການຍົກບາບໂທດ ຕັ້ງ-ແຕ່ກຸງເຢຣູຊາເລັມໄປ" (ລູກາ 24:47)

**ເຮົາຮູ້ຈັກຄວາມບາບໄດ້ແນວໃດ?**

"ພຣະບັນຍັດໄດ້ເຮັດໃຫ້ສັງເກດຮູ້ຈັກຄວາມບາບ" (ໂຣມ 3:20)

**ແມ່ນໃຜແນ່ເປັນຄົນບາບ?**

"ດ້ວຍວ່າເຮົາໄດ້ຟ້ອງແລ້ວວ່າ ທັງຄົນຢິວແລະຄົນຕ່າງຊາດກໍຢູ່ໃຕ້ອຳນາດຂອງຄວາມຜິດບາບທຸກຄົນ" (ໂຣມ 3:9)

**ຄົນທີ່ບໍ່ຍອມເຊື່ອຟັງຈະໄດ້ຮັບຫຍັງ?**

"ຢ່າໃຫ້ຜູ້ໃດລໍ້ລວງພວກທ່ານດ້ວຍຄຳເວົ້າອັນໄຮ້ປໂຍດ ເພາະການເຮັດເຫລົ່ານີ້ແຫລະ, ພຣະພິໂຣດຂອງພຣະເຈົ້າຈຶ່ງຕົກໃສ່ຄົນທັງຫລາຍທີ່ບໍ່ຍອມເຊື່ອຟັງ" (ເອເຟໂຊ 5:6)

### ປະສົບການແຫ່ງຄວາມລອດພົ້ນ

**ໃຜເປັນຜູ້ບອກຄົນທັງຫລາຍໃຫ້ຮູ້ເຖິງສະພາບຄວາມຜິດບາບ?**

“ເມື່ອພຣະອົງ(ຜູ້ປະລົ້ມປະໂລມ)ສະເດັດມາແລ້ວ ພຣະອົງນັ້ນແຫລະ, ຈະຊົງບັນດົນໃຫ້ໂລກຮູ້ແຈ້ງໃນເຣື່ອງຄວາມຜິດບາບ ຄວາມຊອບທັມ ແລະການພິພາກສາ” (ໂຢຮັນ 16:8)

**ແລ້ວຄົນທີ່ກັບໃຈໃໝ່ເຂົາຈະມີຄວາມຂ້ອງໃຈຫຍັງ?**

“ເມື່ອຄົນທັງຫລາຍໄດ້ຍິນດັ່ງນັ້ນແລ້ວກໍຮູ້ສຶກເຈັບຊໍ້າກິນແຫນງໃຈ ຈຶ່ງກ່າວແກ່ເປໂຕແລະອັຄສາວົກວ່າ, ‘ພີ່ນ້ອງເອີຍ, ພວກເຮົາຈະເຮັດຢ່າງໃດ?’ “ແລະໄດ້ພາທ່ານສອງອອກມາຖາມວ່າ, ‘ທ່ານເອີຍ, ຂ້ານ້ອຍຈະຕ້ອງເຮັດແນວໃດຕໍ່ໄປຈຶ່ງຈະພົ້ນໄດ້’” (ກິດຈະການ 2:37; 16:30)

**ແລ້ວເຂົາໄດ້ຮັບຄໍາຕອບແນວໃດ?**

“ຝ່າຍເປໂຕຈຶ່ງກ່າວແກ່ເຂົາວ່າ, ‘ຈົ່ງຖິ້ມໃຈເກົ່າເອົາໃຈໃຫມ່ ແລະຮັບບັບຕິສະມາໃນພຣະນາມຂອງອົງພຣະເຢຊູຄຣິດທຸກຄົນ ເພື່ອການຊົງຍົກບາບໂທດຂອງພວກທ່ານ ແລ້ວພວກທ່ານຈະໄດ້ຮັບຂອງພຣະຣາຊທານ ຄືພຣະວິນຍານບໍຣິສຸດ’” “ໂປໂລກັບຊີລາຕອບວ່າ, ‘ຈົ່ງເຊື່ອວາງໃຈໃນພຣະເຢຊູເຈົ້າແລ້ວທ່ານຈະໄດ້ພົ້ນ ທັງຄົວເຮືອນຂອງທ່ານດ້ວຍ’” (ກິດຈະການ 2:38; 16:31)

## ຜົນຂອງການຖິ້ມໃຈເກົ່າເອົາໃຈໃໝ່ທີ່ແທ້ຈິງ

**ແລ້ວຄົນສໍານຶກຜິດທີ່ແທ້ຈິງຈະເຮັດແນວໃດ?**

“ຂ້າພຣະອົງສາລະພາບບາບຜິດຂອງຂ້າພຣະອົງ ຂ້າພຣະອົງເປັນທຸກເພາະບາບຂອງຂ້າພຣະອົງ” (ເພງສັນລະເສີນ 38:18)

ໝາຍເຫດ: ນີ້ແມ່ນປະໂຫຍກພາສາອັງກິດ “I will *declare mine iniquity*, I will be *sorry* for my sin.”

**ແມ່ນຫຍັງແມ່ນຜົນຂອງຄວາມທຸກໃຈຢ່າງຊອບພະໄທຂອງພະເຈົ້າ?**

“ດ້ວຍວ່າຄວາມທຸກໃຈຕາມຢ່າງຊອບພຣະທັຍພຣະເຈົ້ານັ້ນ ຍ່ອມເຮັດໃຫ້ກັບໃຈເສັງໃຫມ່ ຊຶ່ງນໍາໄປສູ່ຄວາມພົ້ນ” (2 ໂກຣິນໂທ 7:10)

**ແມ່ນຫຍັງແມ່ນຜົນຂອງຄວາມທຸກໃຈຕາມແບບຢ່າງຂອງໂລກ?**

“ແຕ່ຄວາມທຸກໃຈຕາມຢ່າງໂລກນັ້ນ ຍ່ອມນໍາໄປເຖິງຄວາມຕາຍ” (2 ໂກຣິນໂທ 7:10)

**ຄວາມທຸກໃຈຕາມຢ່າງຊອບພະໄທພະເຈົ້າໄດ້ສະແດງອອກໃນຕົວເຮົາແນວໃດແດ່?**

“ຈົ່ງພິຈາຣະນາເບິ່ງວ່າ ການທີ່ເຈົ້າທັງຫລາຍໄດ້ທຸກໃຈຕາມຢ່າງຊອບພຣະທັຍພຣະເຈົ້ານັ້ນ ໄດ້ເຮັດໃຫ້ພວກເຈົ້າເກີດມີຄວາມຂຍັນຂັນແຂງຫລາຍເທົ່າໃດ ເອົາໃຈໃສ່ທີ່ຈະແກ້ຕົວຫລາຍເທົ່າໃດ ຄວາມເຄືອງໃຈຄວາມຕື່ນຕົວ ຄວາມອາລັຍ ຄວາມຮ້ອນຮົນ ແລະການລົງໂທດຕອບແທນຫລາຍເທົ່າໃດ ໃນທຸກສິ່ງເຫລົ່ານີ້ເຈົ້າທັງຫລາຍໄດ້ສະແດງຕົວວ່າເປັນຄົນບໍ່ມີຜິດໃນການນັ້ນແລ້ວ” (2 ໂກຣິນໂທ 7:11)

ໝາຍເຫດ: ສຳລັບຂໍ້ຄວາມທີ່ຂີດກ້ອງຂ້າງເທິງ ພາສາອັງກິດໃຊ້ຄຳວ່າ “carefulness” ແລະ “clearing of yourselves”

**ເມື່ອໂຢຮັນຜູ້ໃຫ້ບັບຕິສະມາເຫັນພວກຟາຣິຊາຍແລະພວກກາດູຊາຍເຂົ້າມາຫາເພື່ອຮັບບັບຕິສະມາ ທ່ານໂຢຮັນໄດ້ກ່າວແກ່ເຂົາແນວໃດ?**

“ຄັນໂຢຮັນເຫັນພວກຟາຣິຊາຍແລະພວກຊາດູກາຍ ພາກັນມາຈຳນວນຫລວງຫລາຍເພື່ອຈະຮັບບັບຕິສະມາ ທ່ານຈຶ່ງກ່າວແກ່ເຂົາວ່າ, ‘ອ້າຍຊາດງູຮ້າຍເຮີຍ, ໃຜໄດ້ບອກສູໃຫ້ປົບໜີຈາກພຣະພິໂຣດທີ່ຈວນຈະມາເຖິງນັ້ນ’” (ມັດທາຍ 3:7)

**ແລ້ວໂຢຮັນໄດ້ບອກເຂົາໃຫ້ເຮັດຫຍັງ?**

“ເຫດສັນນັ້ນຈົ່ງປະຕິບັດໃຫ້ໄດ້ຜົນສົມກັບການຖິ້ມໃຈເກົ່າເອົາໃຈໃຫມ່” (ມັດທາຍ 3:8)

ໝາຍເຫດ: ຖ້າບໍ່ມີການປ່ຽນແປງກໍບໍ່ມີການຖິ້ມໃຈເກົ້າເອົາໃຈໃໝ່ທີ່ແທ້ຈິງ. ການຖິ້ມໃຈເກົ່າເອົາໃຈໃໝ່ແມ່ນການປ່ຽນແປງທັງຈິດໃຈແລະການກະທຳ.

**ເມື່ອພະເຈົ້າສັ່ງໂຢນາໄປເຕືອນຊາວເມືອງນີເນເວ ຊາວເມືອງນັ້ນໄດ້ເຮັດແນວໃດເພື່ອບົ່ງບອກເຖິງການຖິ້ມໃຈເກົ່າເອົາໃຈໃໝ່ຂອງພວກເຂົາ ແລະຜົນທີ່ຕາມມາແມ່ນຫຍັງ?**

“ຕໍ່ມາ ພຣະເຈົ້າໄດ້ຊົງເຫັນຊາວນະຄອນນີເນເວເລີກປະພຶດຊົ່ວ ພຣະອົງຈຶ່ງຊົງປ່ຽນພຣະທັຍ ແລະບໍ່ຊົງລົງໂທດເຂົາຕາມທີ່ໄດ້ຊົງສັນຍາໄວ້” (ໂຢນາ 3:10)

**ແມ່ນຫຍັງເປັນຕົວນຳຄົນບາບໃຫ້ກັບໃຈໃໝ່?**

“ຫລືວ່າເຈົ້າປມາດພຣະກະຣຸນາຄຸນອັນສົມບູນ ແລະຄວາມອົດກັ້ນພຣະທັຍກັບຄວາມອົດທົນຂອງພຣະອົງ ເຈົ້າບໍ່ຮູ້ຫລືວ່າ<u>ພຣະກະຣຸນາຄຸນຂອງພຣະເຈົ້ານັ້ນ ຊົງປະສົງຈະນຳເຈົ້າໃຫ້ກັບໃຈເສັຽໃຫມ່</u>” (ໂຣມ 2:4)

## ການສາລະພາບແລະການໃຫ້ອະໄພ

**ພະເຈົ້າໄດ້ໃຫ້ຄຳສັ່ງແນວໃດກ່ຽວກັບຄວາມບາບທີ່ໄດ້ກະທຳ?**

“ຈົ່ງກ່າວແກ່ຄົນອິສຣາເອນວ່າ ຜູ້ຊາຍກໍດີ ຫລືຍິງກໍດີກະທຳບາບຢ່າງທີ່ມະນຸດກະທຳ ຄືປະພຶດຝ່າຝືນຕໍ່ພຣະເຈົ້າ ແລະຜູ້ນັ້ນໄດ້ຜິດແລ້ວ <u>ກໍໃຫ້ຜູ້ນັ້ນສາລະພາບຄວາມຜິດທີ່ເຂົາໄດ້ກະທຳ</u>” (ຈົດບັນຊີ 5:6,7)

**ມັນເປັນການໄຮ້ປະໂຫຍດປານໃດທີ່ຈະປິດບັງບາບໄວ້?**

“ແຕ່ຖ້າທ່ານທັງຫລາຍບໍ່ໄດ້ກະທຳເຊັ່ນນີ້ ທ່ານທັງຫລາຍໄດ້ກະທຳບາບຕໍ່ພຣະຜູ້ເປັນເຈົ້າ <u>ຈົ່ງຮູ້ແນ່ເຖີດວ່າບາບຂອງທ່ານກໍຕາມທັນ</u>” (ຈົດບັນຊີ 32:23) “ພຣະອົງຊົງຮູ້ຈັກຄວາມຜິດຂອງຂ້າພຣະອົງ ແລະຊົງເຫັນຄວາມຜິດອັນທີ່ຂ້າພຣະອົງອຳໄວ້” (ເພງສັນລະເສີນ 90:8) “ໃນທຸກສິ່ງທີ່ສ້າງຂຶ້ນນັ້ນ ບໍ່ມີສິ່ງໃດບັງລັບໄວ້ຈາກພຣະພັກຂອງພຣະອົງ ແຕ່ທຸກສິ່ງໄດ້ປາກົດແຈ້ງຕໍ່ພຣະເນດຂອງພຣະອົງ ຜູ້ທີ່ເຮົາຈະຕ້ອງໃຫ້ການນັ້ນ” (ເຮັບເຣີ 4:13)

**ພະອົງຊົງສັນຍາວ່າແນວໃດເມື່ອເຮົາສາລະພາບບາບຂອງເຮົາທັງໝົດ?**

"ຖ້າເຮົາທັງຫລາຍສາຣະພາບຜິດບາບຂອງພວກເຮົາ พระອົງຊົງສັດຊື່ແລະທ່ຽງທັມ ຈະຊົງໂຜດຍົກບາບຂອງພວກເຮົາ ແລະຈະຊົງໂຜດຊຳຣະລ້າງເຮົາທັງຫລາຍຈາກການອະທັມຫມົດສິ້ນ" (1 ໂຢຮັນ 1:9)

**ຜົນຂອງການປິດບັງບາບໄວ້ແລະຜົນຂອງການສາລະພາບບາບອອກມາແຕກຕ່າງກັນແນວໃ?**

"ຖ້າເຈົ້າພຍາຍາມປິດບັງບາບໄວ້ ຊີວິດຂອງເຈົ້າກໍຈະບໍ່ຈະເຣີນ ຈົ່ງສາລະພາບແລະປ່ຽນໃຈເສັຽ ແລ້ວພຣະເຈົ້າຈະຊົງສຳແດງພຣະກະຣຸນາຕໍ່ເຈົ້າ" (ສຸພາສິດ 28:13)

**ສາລະພາບບາບທຸກຢ່າງ**

**ບາບກຳໃດແດ່ທີ່ຄວນສາລະພາບອອກມາ?**

"ເມື່ອຜູ້ນຶ່ງຜູ້ໃດກະທຳບາບກັມໃດໆທີ່ກ່າວມານີ້ ກໍໃຫ້ເຂົາສາລະພາບຄວາມຜິດທີ່ເຂົາໄດ້ກະທຳ" ( ລະບຽບພວກເລວີ 5:5)

**ພວກອິສຣາເອນເຄີຍສາລະພາບອອກມາຫລາຍປານໃດກ່ຽວກັບການກະທຳຜິດຂອງພວກເຂົາ?**

"ພວກເຂົາໄດ້ເວົ້າຕໍ່ຊາມູເອນວ່າ, 'ທ່ານເອີຍ ຂໍໄດ້ໂຜດກະຣຸນາອ້ອນວອນພຣະຜູ້ເປັນເຈົ້າຂອງທ່ານສຳລັບພວກຂ້າພະເຈົ້າແດ່ ເພື່ອວ່າພວກຂ້າພະເຈົ້າຈະບໍ່ຕາຍ ນອກຈາກຄວາມຜິດຢ່າງອື່ນຂອງພວກຂ້າພະເຈົ້າແລ້ວ ພວກຂ້າພະເຈົ້າກໍໄດ້ເຮັດຜິດໂດຍການຮ້ອງຂໍເອົາເຈົ້າຊີວິດ'" (1 ຊາມູເອນ 12:19)

**ເມື່ອກະສັດດາວິດສາລະພາບບາບຂອງພະອົງ ພະອົງໄດ້ກ່າວວ່າພະເຈົ້າໄດ້ກະທຳຫຍັງ?**

"ແຕ່ເມື່ອຂ້າພຣະອົງຍອມຮັບຜິດຕໍ່ພຣະອົງ ໂດຍບໍ່ໄດ້ປົກປິດຫຍັງໄວ້ ຂ້າພຣະອົງສາລະພາບທຸກຢ່າງ ແລ້ວພຣະອົງກໍຊົງອະພັຍໃນການລ່ວງລະເມີດຂອງຂ້າພຣະອົງ" (ເພງສັນລະເສີນ 32:5)

**ພະເຈົ້າຍິນດີໃນການໃຫ້ອະໄພ**

**ພະອົງພ້ອມທີ່ຈະເຮັດຫຍັງ ເມື່ອທຸກຄົນສະແຫວງຫາການໃຫ້ອະໄພ?**

"ຂ້າແດ່ອົງພຣະຜູ້ເປັນເຈົ້າ ເພາະພຣະອົງປະເສີດແລະຊົງພ້ອມທີ່ຈະປະທານອະພັຍ ອຸດົມດ້ວຍຄວາມຮັກຫມັ້ນຄົງຕໍ່ບັນດາຜູ້ຮ້ອງທູນພຣະອົງ" (ເພງສັນລະເສີນ 86:5)

**ກະສັດດາວິດໄດ້ຝາກຄວາມຫວັງແຫ່ງການໄດ້ຮັບການໃຫ້ອະໄພໄວ້ກັບຫຍັງ?**

"ໂອ້ ພຣະອົງເຈົ້າຂ້າ ຍ້ອນຄວາມຮັກຫມັ້ນຄົງຂອງພຣະອົງ ຂໍຊົງໂຜດເມດຕາຂ້າພຣະອົງເທີ້ນ ຍ້ອນຄວາມເມດຕາອັນຍິ່ງໃຫຍ່ຂອງພຣະອົງ ຂໍຊົງປັດເປົ່າຄວາມຜິດຂອງຂ້າພຣະອົງອອກໄປດ້ວຍ" (ເພງສັນລະເສີນ 51:1)

**ອັນໃດເປັນຕົວວັດແທກຄວາມຍິ່ງໃຫຍ່ແຫ່ງພະກະລຸນາຂອງພະເຈົ້າ?**

“ຟ້າສວັນສູງເຫນືອແຜ່ນດິນໂລກຫລາຍເທົ່າໃດ ຄວາມຮັກທີ່ພຣະອົງຊົງມີແກ່ຜູ້ທີ່ຢຳເກງພຣະອົງກໍສູງຫລາຍເທົ່ານັ້ນ” (ເພງສັນລະເສີນ 103:11)

**ພະເຈົ້າຊົງໃຫ້ອະໄພຫລາຍປານໃດແກ່ຜູ້ທີ່ກັບໃຈໃໝ່?**

“ຊົງໃຫ້ຄົນອະທັມຫນີຈາກທາງດຳເນີນຊີວິດຂອງເຂົາ ແລະຊົງປ່ຽນແນວທາງຄິດຂອງເຂົາ ຊົງໃຫ້ເຂົາກັບຄືນມາຫາພຣະຜູ້ເປັນເຈົ້າຂອງເຮົາ ພຣະອົງຊົງເຕັມໄປດ້ວຍຄວາມເມດຕາແລະຊິໃຫ້ອະພັຍໄວ” (ເອຊາຍາ 55:7)

ໝາຍເຫດ: ສຳລັບຂໍ້ຄວາມທີ່ຂີດກ້ອງໄວ້ຂ້າງເທິງ ພາສາອັງກິດເຂົາໄດ້ແປອອກມາວ່າ “ພະອົງຈະຊົງໃຫ້ອະໄພຢ່າງເຫລືອລົ້ນ” “He will abundantly pardon.”

**ແມ່ນຫຍັງແມ່ນເຫດຜົນຂອງການພ້ອມທີ່ຈະໃຫ້ອະໄພຂອງພະເຈົ້າ**

“ໂອ ພຣະຜູ້ເປັນເຈົ້າເອີຍ, ບໍ່ມີພຣະເຈົ້າອົງໃດເຫມືອນພຣະອົງເລີຍ ພຣະອົງຊົງຍົກໂທດຄວາມບາບຂອງໄພ່ພົນຜູ້ທີ່ຍັງເຫລືອຢູ່ ພຣະອົງຈະບໍ່ພິໂຣດອີກຕໍ່ໄປ ແຕ່ຍິນດີຈະສະແດງຄວາມຮັກຫມັ້ນຄົງຕໍ່ພວກຂ້າພຣະອົງ” (ມີກາ 7:18) (ເບິ່ງເພີ່ມເຕີມໃນ ເພງສັນລະເສີນ 78:38)

**ເປັນຫຍັງພະອົງຄືອົດກັ້ນພະໄທໄວ້ດົນນານຕໍ່ຄົນທີ່ສືບຕໍ່ເຮັດບາບ?**

“ອົງພຣະຜູ້ເປັນເຈົ້າບໍ່ໄດ້ຊົງເສັຍຊ້າໃນເຣື່ອງພຣະສັນຍາຂອງພຣະອົງ ເຫມືອນດັ່ງບາງຄົນ ຄິດວ່າຊ້າ ແຕ່ພຣະອົງຊົງອົດກັ້ນພຣະທັຍໄວ້ດົນນານເພາະເຫັນແກ່ທ່ານທັງຫລາຍ ພຣະອົງບໍ່ຊົງປະສົງທີ່ຈະໃຫ້ຜູ້ນຶ່ງຜູ້ໃດຈິບຫາຍເສັຽ ແຕ່ຊົງປາຖນາທີ່ຈະໃຫ້ຄົນທັງປວງມາເຖິງການຖິ້ມໃຈເກົ່າເອົາໃຈໃຫມ່” ( 2 ເປໂຕ 3:9)

## ເລື່ອງຕົວຢ່າງ

**ໃນຄຳອຸປະມາເລື່ອງບຸດລົງຫາຍ ເມື່ອລູກຊາຍນ້ອຍກັບໃຈແລະຕ່າວກັບຄືນເຮືອນ ພໍ່ຂອງລາວໄດ້ເຮັດແນວໃດຕໍ່ລາວ?**

“ແລ້ວເຂົາກໍລຸກຂຶ້ນຄືນເມືອຫາພໍ່ຂອງຕົນ ແຕ່ເມື່ອເຂົາຍັງຢູ່ໄກ ພໍໄດ້ແລເຫັນເຂົາກໍມີຄວາມເມດຕາ ຈຶ່ງແລ່ນອອກໄປກອດຄໍຈູບເຂົາດ້ວຍຄວາມຮັກແພງ” (ລູກາ 15:20)

**ຜູ້ເປັນພໍ່ໄດ້ເຮັດຫຍັງເພື່ອສະແດງອອກເຖິງຄວາມຍິນດີທີ່ລູກຊາຍກັບຄືນເຮືອນ?**

“ແຕ່ພໍ່ໄດ້ເອີ້ນບອກພວກຂ້ອຍໃຊ້ຂອງຕົນວ່າ, ‘ຈົ່ງຮີບເອົາເຄື່ອງນຸ່ງຢ່າງດີທີ່ສຸດອອກມານຸ່ງໃຫ້ລູກຂອງເຮົາ ແລະເອົາແຫວນມາສວມໃສ່ມືກັບເອົາເກີບມາສຸບໃສ່ຕີນ ແລ້ວຈົ່ງເອົາງົວຫນຸ່ມໂຕອ້ວນພີມາຂ້າລ້ຽງກັນເພື່ອຊື່ນຊົມຍິນດີ ເພາະລູກຂອງເຮົາຄົນນີ້ຕາຍແລ້ວກໍໄດ້ຄືນມາ ເສັຽໄປແລ້ວກໍໄດ້ພົບກັນອີກ’ ແລະເຂົາທັງ-ຫລາຍກໍຕັ້ງຕົ້ນມີຄວາມຊົມຊື່ນຍິນດີ” (ລູກາ 15:22-24)

**ຈະມີຄວາມຮູ້ສຶກແນວໃດໃນສະຫວັນເມື່ອຄົນບາບກັບໃຈ?**

"ດັ່ງນັ້ນແຫລະ, ເຮົາບອກທ່ານທັງຫລາຍວ່າ ຈະມີຄວາມປິຕິຍິນດີໃນຖ້າມກາງພວກເທວະດາຂອງພຣະເຈົ້າ ເພາະເຫັນແກ່ຄົນບອກສິນທັນຄົນດຽວ ທີ່ຖິ້ມໃຈເກົ່າເອົາໃຈໃຫມ່" (ລູກາ 15:10)

**ເຮເຊກີຢາໄດ້ກ່າວວ່າພະເຈົ້າໄດ້ກະທຳຫຍັງແກ່ລາວ?**

"ເພາະເຫັນແກ່ສະວັດດີພາບຂອງຂ້າພຣະອົງ ຂ້າພຣະອົງຈຶ່ງມີຄວາມຂົມຂື່ນມາກຍິ່ງ ແຕ່ພຣະອົງຊົງຮັກຊີວິດຂອງຂ້າພຣະອົງ ບໍ່ໃຫ້ຕົກຫລຸມແຫ່ງຄວາມພິນາດ ເພາະການບາບຂອງຂ້າພຣະອົງກໍໄດ້ຮັບອະພັຍ" (ເອຊາຢາ 38:17)

**ພະເຈົ້າຢາກແຍກບາບອອກຈາກເຮົາໃຫ້ບາບນັ້ນໄກຫ່າງຫລາຍປານໃດ?**

"ພຣະອົງຍັງຈະເມດຕາຕໍ່ພວກຂ້າພຣະອົງອີກເທື່ອນຶ່ງຄື ພຣະອົງຈະຢຽບຄວາມຜິດຂອງພວກຂ້າພຣະອົງໄວ້ໃຕ້ພຣະບາດ ແລະໂຍນຄວາມບາບຂອງພວກຂ້າພຣະອົງລົງໃນທະເລເລິກ" (ມີກາ 7:19) "ທິດຕາເວັນອອກໄກຈາກທິດຕາເວັນຕົກຫລາຍເທົ່າໃດ ພຣະອົງກໍຊົງຍົກຄວາມບາບຂອງພວກເຮົາອອກໄປໄກຫລາຍເທົ່ານັ້ນ" (ເພງສັນລະເສີນ 103:12)

**ຄົນໃນເມືອງເອເຟໂຊເຮັດຫຍັງເພື່ອສະແດງໃຫ້ຮູ້ວ່າ ພວກເຂົາໄດ້ກັບໃຈຢ່າງແທ້ຈິງ?**

"ມີຫລາຍຄົນທີ່ເຊື່ອແລ້ວໄດ້ມາສາຣະພາບແລະເປີດເຜີຍການທີ່ເຂົາເຄີຍເຮັດ ມີຫລາຍຄົນທີ່ໃຊ້ເວດມົນຄາຖາໄດ້ເອົາຕຳຣາຂອງຕົນມາເຜົາໄຟເສັຽຕໍ່ຫນ້າຄົນທັງປວງ ຕຳຣາເຫລົ່ານັ້ນຄິດຣາຄາເປັນເງິນຫ້າຫມື່ນຫລຽນ" (ກິດຈະການ 19:18-19)

## ເງື່ອນໄຂຂອງການໃຫ້ອະໄພ

**ພະຄຣິດໄດ້ບອກໃຫ້ເຮົາຂໍການໃຫ້ອະໄພເທິງພື້ນຖານອັນໃດ?**

"ຂໍຊົງໂຜດຍົກໂທດໃຫ້ຂ້າພຣະອົງ ເຫມືອນຂ້າພຣະອົງຍົກໂທດໃຫ້ແກ່ຜູ້ທີ່ເຮັດຜິດຕໍ່ຂ້າພຣະອົງນັ້ນ" (ມັດທາຍ 6:12)

**ເຮົາຄວນມີຈິດໃຈຂອງການໃຫ້ອະໄພແນວໃດ ຖ້າເຮົາຢາກຮັບການໃຫ້ອະໄພຈາກພະເຈົ້າ?**

"ເພາະວ່າຖ້າວ່າທ່ານຍົກຄວາມຜິດຂອງເພື່ອນມະນຸດ ພຣະບິດາຂອງທ່ານຜູ້ຊົງສະຖິດໃນສວັນຈະຊົງໂຜດຍົກຄວາມຜິດຂອງທ່ານດ້ວຍ ແຕ່ຖ້າທ່ານບໍ່ຍົກຄວາມຜິດຂອງເພື່ອນມະນຸດ ພຣະບິດາຂອງທ່ານກໍຈະບໍ່ຊົງໂຜດຍົກຄວາມຜິດຂອງທ່ານເຫມືອນກັນ" (ມັດທາຍ 6:14-15)

**ຄວາມຈິງທີ່ພະເຈົ້າຊົງໃຫ້ອະໄພເຮົານັ້ນແມ່ນຢືນຢູ່ເທິງພື້ນຖານອັນໃດ?**

"ຈົ່ງມີໃຈເມດຕາຕໍ່ກັນ ມີໃຈເອັນດູກັນ ແລະອະພັຍໂທດໃຫ້ກັນ ເຫມືອນດັ່ງພຣະເຈົ້າໄດ້ຊົງໂຜດອະພັຍໂທດໃຫ້ແກ່ພວກທ່ານໃນອົງພຣະຄຣິດນັ້ນ" (ເອເຟໂຊ 4:32)

## ຄວາມສຸກຂອງຜູ້ໃຫ້ແລະຜູ້ຮັບ

**ການໃຫ້ກັບໃຈໃໝ່ແລະການໃຫ້ອະໄພຖືກປະທານໃຫ້ຜ່ານໃຜ?**

"<u>ພຣະເຢຊູ</u>ຊຶ່ງທ່ານທັງຫລາຍໄດ້ຂ້າເສັຽໂດຍແຂວນໄວ້ທີ່ຕົ້ນໄມ້ນັ້ນ ພຣະເຈົ້າແຫ່ງບັນພະບຸຣຸດຂອງເຮົາໄດ້ຊົງບັນດານໃຫ້ເປັນຄືນມາໃຫມ່ ພຣະອົງນັ້ນແຫລະ, ພຣະເຈົ້າໄດ້ຊົງຍົກຕັ້ງໄວ້ທີ່ພຣະຫັດກ້ຳຂວາຂອງພຣະອົງ ໃຫ້ເປັນອົງພຣະຜູ້ນຳແລະອົງພຣະຜູ້ໂຜດໃຫ້ພົ້ນ ເພື່ອຈະໃຫ້ຊົນອິສຣາເອນກັບໃຈໃຫມ່ ແລ້ວຈະຊົງໂຜດຍົກຄວາມຜິດບາບຂອງເຂົາ" (ກິດຈະການ 5:30-31)

**ຜູ້ທີ່ໄດ້ຮັບການໃຫ້ອະໄພຈະມີສະພາບແບບໃດ?**

"<u>ຄວາມສຸກ</u>ເປັນຂອງຜູ້ທີ່ໄດ້ຮັບການໃຫ້ອະພັຍ ແລະຜູ້ທີ່ໄດ້ຮັບການຍົກໂທດ ຄວາມສຸກເປັນຂອງຜູ້ທີ່ພຣະຜູ້ເປັນເຈົ້າບໍ່ໄດ້ຕໍ່ວ່າການກະທຳຜິດຂອງເຂົາ ແລະຜູ້ບໍ່ມີກົນອຸບາຍຫລອກລວງຄົນອື່ນ" (ເພງສັນລະເສີນ 32:1-2)